Quotidien national “POPULATION” – Vientiane – 6-10-2011

# ຍົກລະດັບວິຊາການຄົ້ນຄວ້າດ້ານສຸຂະພາບຈະເລີນພັນ

❖ ມະຫາວິທະຍາໄລວິທະຍາສາດສຸຂະພາບໄດ້ຈັດຊຸດອົບຮົມວິທີວິທະຍາການຄົ້ນຄວ້າດ້ານສຸຂະພາບຈະເລີນພັນຄັ້ງທີ 2 ໃຫ້ນັກວິຊາການຂອງຕົນຂຶ້ນໃນວັນທີ 3 ຕຸລາ 2011 ນີ້, ທີ່ສະຖາບັນດັ່ງກ່າວ ໂດຍການເປັນກຽດເຂົ້າຮ່ວມຂອງທ່ານ ຮສ.ດຣ. ສິງ ເມໂນລາດ ຮອງອະທິການບໍດີມະຫາວິທະຍາໄລວິທະຍາສາດສຸຂະພາບ, ພ້ອມດ້ວຍແຂກຖືກເຊີນຈາກພາກສ່ວນຕ່າງໆ ອ້ອມຂ້າງກະຊວງສາທາລະນະສຸກ ແລະ ອົງການຈັດຕັ້ງສາກົນ-ນັກສຳມະນາກອນເຂົ້າຮ່ວມ.

ການຝຶກອົບຮົມໃນຄັ້ງນີ້ແນໃສ່ເພື່ອຍົກລະດັບທາງດ້ານຄວາມຮູ້, ທັກສະ ແລະ ປະສົບການຄົ້ນຄວ້າດ້ານສຸຂະພາບຈະເລີນພັນໃຫ້ແກ່ພະນັກງານແພດໝໍ ແລະ ອາຈານສອນຂະແໜງອອກລູກ-ພະຍາດຍິງ ແລະ ຂະແໜງແມ່ ແລະ ເດັກຂອງລາວໃຫ້ສູງຂຶ້ນ ພ້ອມທັງສາມາດນຳໃຊ້ຄວາມຮູ້ຈາກການຝຶກອົບຮົມຄັ້ງນີ້ ເຂົ້າໃນວຽກງານຄົ້ນຄວ້າໃນຂະແໜງການທີ່ກ່ຽວຂ້ອງຢ່າງມີປະສິດທິຜົນ ແນໃສ່ປະກອບສ່ວນເຮັດໃຫ້ອັດຕາການເຈັບເປັນ ແລະ ການຕາຍຂອງແມ່ ແລະ ເດັກນ້ອຍລາວນັບມື້ນັບຫຼຸດໜ້ອຍຖອຍລົງເທື່ອລະກ້າວ.

ຊຸດອົບຮົມຈະໄດ້ດຳເນີນໄປເປັນເວລາ 10 ອາທິດ ຈຶ່ງຈະສຳເລັດ ເຊິ່ງຊຸດອົບຮົມດັ່ງກ່າວໄດ້ຮັບການສະໜັບສະໜູນຈາກມູນນິທິເຈນີວາເພື່ອການສຶກສາ ແລະ ຄົ້ນຄວ້າວິທະຍາສາດການແພດປະເທດສະວິດ.**(ຂ່າວ: ພູວັນ)**

